# ບົດຮຽນທີ 11: ຄວາມລົ້ມເລວ

*ຂໍ້ຄວາມຈຳ*

*ແລະຍິ່ງກວ່ານັ້ນອີກ, ພວກເຮົາຍັງຊື່ນຊົມຍິນດີໃນຄວາມທຸກຍາກລຳບາກ ດ້ວຍ, ເພາະຮູ້ວ່າ ຄວາມທຸກຍາກລຳບາກນັ້ນເຮັດໃຫ້ເກີດຄວາມອົດທົນ ແລະ ຄວາມອົດ ທົນເຮັດໃຫ້ເກີດລັກສະນະນິໄສ ແລະ ລັກສະນະນິໄສເຮັດໃຫ້ເກີດຄວາມຫວັງ. ບັດນີ້ ຄວາມຫວັງບໍ່ໄດ້ເຮັດໃຫ້ພວກເຮົາຕ້ອງອັບອາຍ, ເພາະວ່າ ພຣະເຈົ້າໄດ້ຖອກເທຄວາມຮັກ ເຂົ້າໃນຈິດໃຈຂອງພວກເຮົາ ໂດຍທາງພຣະວິນຍານບໍຣິສຸດຜູ້ທີ່ພຣະເຈົ້າໄດ້ມອບໃຫ້ ພວກແກ່ເຮົາແລ້ວ" (ຣມ 5:3–5, NKJV)*

1. ເມື່ອເບິ່ງຈາກເລື່ອງລາວໃນພຣະຄຳພີ ມາລະໂກ 4:39-40, ການມີຢູ່ຂອງ**ພຣະເຢຊູຊ່ວຍປ່ຽນແປງສະຖານະການອັນໂຫດຮ້າຍ ໃຫ້ກາຍເປັນຄວາມສະຫງົບ**ໄດ້ແນວໃດ? ແລ້ວເປັນຫຍັງ ເວລາທີ່ພວກເຮົາ**ປະເຊີນກັບບັນຫາໜັກໆ** ໃນມື້ນີ້, ພວກເຮົາມັກຈະລືມໄປວ່າ **ພຣະອົງກໍຊົງສະຖິດຢູ່ຄຽງຂ້າງເຮົາສະເໝີ**?
2. **ໂຢບຕ້ອງສູນເສຍທຸກສິ່ງທັງໆທີ່ລາວເປັນຄົນສັດຊື່**. ທ່ານຄິດວ່າ ຍ້ອນຫຍັງ **ໂຢບຈຶ່ງຍັງສາມາດ ຕັ້ງໝັ້ນຄົງໃນຄວາມເຊື່ອໄດ້** ທັງໆທີ່ພັນລະຍາບອກໃຫ້ແຊ່ງພຣະເຈົ້າ ແລະ ໝູ່ເພື່ອນກໍຊ້ຳເຕີມ? ເມື່ອທ່ານ**ປະເຊີນກັບອຸປະສັກທີ່ບໍ່ຍຸດຕິທຳ ຫຼື ຫາທາງອອກບໍ່ໄດ້**, ສິ່ງໃດທີ່ຊ່ວຍດຶງຈິດໃຈຂອງທ່ານໄວ້ ບໍ່ໃຫ້ຫັນຫຼັງໃຫ້ພຣະເຈົ້າ?
3. ຈາກພຣະທຳ ເຮັບເຣີ 12:2 ແລະ ໂຣມ 8:28, ພຣະຄຳພີບອກວ່າ ຄວາມທຸກໃນຕອນນີ້ທຽບບໍ່ໄດ້ເລີຍກັບສິ່ງດີໆທີ່ພຣະເຈົ້າກຽມໄວ້ໃຫ້. ໃນຊີວິດຈິງ ທ່ານມີວິທີການແນວໃດໃນການ **ປັກຕາເບິ່ງທີ່ພຣະເຢຊູ** ແທນທີ່ຈະໄປ**ຈ້ອງເບິ່ງຂະໜາດຂອງບັນຫາທີ່ຢູ່ຕໍ່ໜ້າທ່ານ**?